# Course: Human Development Economics

# Week 1

# Introduction of Human Resources

**Phavone Keodouangkham**

**Souphanouvong University**

# ອະທິບາຍກ່ຽວກັບວິຊາ

ຮຽນຮູ້ກ່ຽວກັບພາບລວມ ແລະ ທິດສະດີອຸປະທານແຮງງານແນວຄວາມຄິດອຸປະທານແຮງງານ ລວມເຖິງແນວຄວາມຄິດການລົງທຶນໃນຊັບພະຍາກອນມະນຸດ, ການກໍານົດອັດຕາຄ່າຈ້າງ ແລະ ການຈ້າງງານໃນຕະຫລາດ, ສຶກສາໂຄງສ້າງ ແລະ ປະສິດທິພາບຂອງຕະຫລາດແຮງງານເປັນຕົ້ນແມ່ນ ການຜູກຂາດ, ຄວາມບໍ່ສົມບູນຂອງຂໍ້ມູນຂ່າວສານ, ການເຄື່ອນຍ້າຍແຮງງານ ລວມເຖິງໂຄງສ້າງຂອງຄ່າຈ້າງ ແລະ ການກະຈາຍລາຍໄດ້, ການຫວ່າງງານ ແລະ ເງິນເຟີ້, ສະພາບແຮງງານ ແລະ ການຈັດສັນແຮງງານໂດຍຫົວໜ່ວຍທຸລະກິດ, ການວາງແຜນກໍາລັງແຮງງານ ແລະ ນະໂຍບາຍຂອງລັດກ່ຽວກັບຕະຫລາດແຮງງານ.




Resource of image:
https://finelineenergy.ca/commercial-mechanical-systems/

# ອະທິບາຍກ່ຽວກັບວິຊາ

ເສດຖະສາດການພັດທະນາຊັບພະຍາກອນມະນຸດ ເປັນສາຂາວິຊາທີ່ສຶກສາການພັດທະນາ ແລະ ການນຳໃຊ້ຊັບພະຍາກອນມະນຸດເພື່ອການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ສັງຄົມ.

ຈຸດປະສົງຕົ້ນຕໍແມ່ນເພື່ອເພີ່ມປະສິດທິພາບແລະທ່າແຮງຂອງບຸກຄົນເພື່ອສ້າງມູນຄ່າເພີ່ມໃຫ້ແກ່ເສດຖະກິດ.

# ເນື້ອໃນການສອນ

ການລົງທຶນໃນການສຶກສາແລະການຝຶກອົບຮົມ - ກວດສອບຄວາມສໍາພັນລະຫວ່າງການລົງທຶນໃນການພັດທະນາທັກສະແລະຜົນຕອບແທນທາງເສດຖະກິດທັງໃນລະດັບບຸກຄົນ ແລະ ສັງຄົມ , ລວມທັງການວິເຄາະຄ່າໃຊ້ຈ່າຍ - ຜົນປະໂຫຍດຂອງການສຶກສາ.

ທິດສະດີທຶນຂອງມະນຸດ - ອະທິບາຍວ່າຄວາມຮູ້, ທັກສະ, ປະສົບການ, ແລະ ສຸຂະພາບຂອງກໍາລັງແຮງງານແມ່ນຊັບສິນທີ່ສໍາຄັນສໍາລັບການເຕີບໂຕຂອງເສດຖະກິດ ແລະ ສາມາດພັດທະນາໄດ້ໂດຍຜ່ານການລົງທຶນໃນການສຶກສາ ແລະ ການຝຶກອົບຮົມ.

# ເນື້ອໃນການສອນ

**ຕະຫຼາດແຮງງານແລະການຈ້າງງານ** - ວິເຄາະການເຄື່ອນໄຫວຂອງຕະຫຼາດແຮງງານ, ການກຳນົດຄ່າຈ້າງ, ການຫວ່າງງານ, ແລະນະໂຍບາຍການຈ້າງງານທີ່ສົ່ງເສີມການພັດທະນາຊັບພະຍາກອນມະນຸດ.

**ການວັດແທກແລະການປະເມີນຜົນຊັບພະຍາກອນມະນຸດ** - ການສຶກສາວິທີການສໍາລັບການວັດແທກຄຸນນະພາບແລະປະສິດທິພາບຂອງຊັບພະຍາກອນມະນຸດ, ລວມທັງການນໍາໃຊ້ຕົວຊີ້ວັດເຊັ່ນ: ດັດຊະນີການພັດທະນາມະນຸດ.

# ເນື້ອໃນການສອນ

ນະໂຍບາຍສາທາລະນະສຳລັບການພັດທະນາຊັບພະຍາກອນມະນຸດ - ອອກແບບແລະປະເມີນຜົນນະໂຍບາຍດ້ານການສຶກສາ, ສາທາລະນະສຸກ, ແລະສະຫວັດດີການສັງຄົມທີ່ສົ່ງເສີມການພັດທະນາທ່າແຮງຂອງມະນຸດ.

# ຄວາມສຳຄັນ ແລະ ການນຳໃຊ້:

- ວິຊານີ້ມີຄວາມສຳຄັນຕໍ່ການພັດທະນາເສດຖະກິດ-ສັງຄົມ, ໂດຍສະເພາະແມ່ນໃນຍຸກທີ່ພື້ນຖານເສດຖະກິດມີຄວາມຮູ້ມີບົດບາດສຳຄັນ.
- ຄວາມເຂົ້າໃຈກ່ຽວກັບຫຼັກການຂອງເສດຖະກິດການພັດທະນາຊັບພະຍາກອນມະນຸດເຮັດໃຫ້ຜູ້ນະໂຍບາຍ, ຜູ້ບໍລິຫານ, ແລະ ບຸກຄົນສາມາດຕັດສິນໃຈປະສິດທິຜົນກ່ຽວກັບການລົງທຶນໃນການພັດທະນາສ່ວນບຸກຄົນແລະການຄຸ້ມຄອງຊັບພະຍາກອນມະນຸດ.

# ຄວາມສຳຄັນ ແລະ ການນຳໃຊ້:

ການສຶກສາວິຊານີ້ຍັງຊ່ວຍໃຫ້ຄວາມເຂົ້າໃຈກ່ຽວກັບປັດໃຈທີ່ສົ່ງຜົນກະທົບຕໍ່ຄວາມບໍ່ສະເໝີພາບດ້ານລາຍຮັບ, ການເຄື່ອນໄຫວຂອງສັງຄົມ, ແລະການພັດທະນາແບບຍືນຍົງ, ເຮັດໃຫ້ການອອກແບບນະໂຍບາຍແລະໂຄງການສົ່ງເສີມການພັດທະນາຊັບພະຍາກອນມະນຸດຢ່າງເປັນລະບົບແລະມີປະສິດທິພາບ.

# ເນື້ອໃນທີ່ນຳສະເໜີກ່ຽວກັບວິຊາເສດຖະສາດຊັບພະຍາກອນມະນຸດ

01 ພາບລວມຂອງການພັດທະນາມະນຸດ

02 ການວັດແທກການພັດທະນາມະນຸດ ແລະ ດັດຊະນີການພັດທະນາມະນຸດ

03 ຊັບພະຍາກອນມະນຸດ ກັບການປ່ຽນແປງທາງເສດຖະກິດ, ສັງຄົມ ແລະ ສິ່ງແວດລ້ອມ

04 ການຈັດການຊັບພະຍາກອນມະນຸດລະຫວ່າງປະເທດ

05 ນະໂຍບາຍ ແລະ ຍຸດທະສາດ ສຳລັບການພັດທະນາມະນຸດ

# ເນື້ອໃນທີ່ນໍາສະເໜີກ່ຽວກັບວິຊາເສດຖະສາດຊັບພະຍາກອນມະນຸດ

06 ຄວາມຮູ້ກ່ຽວກັບເສດຖະສາດແຮງງານ

07 ອຸປະສົງຂອງແຮງງານ ອຸປະທານຂອງແຮງງານ

08 ການຝຶກອົບຮົມແລະການພັດທະນາກໍາລັງແຮງງານ

09 ຕະຫຼາດແຮງງານ ແລະ ທຶນມະນຸດ

10 ບົດບາດຍິງຊາຍ ແລະ ການພັດທະນາຊັບພະຍາກອນມະນຸດ

11 ການຈ້າງງານ ການວ່າງງານ (Unemployment)

# ພາບລວມຂອງການພັດທະນາ



Resource of image: https://courses.lumenlearning.com/wm-lifespandevelopment/chapter/introduction-to-human-development/

# ຄວາມໝາຍຂອງຄຳວ່າຊັບພະຍາກອນ, ຊັບພະຍາກອນມະນຸດ ແລະ ເສດຖະສາດຊັບພະຍາກອນມະນຸດ.

| ຄຳສັບ | ນິຍາມ |
| --- | --- |
| ຊັບພະຍາກອນ | ໝາຍວ່າ ສິ່ງທີ່ມີຄ່າ, ມີຄຸນນະພາບ ແລະ ຄວາມມັ່ງຄັ່ງທັງມວນຂອງປະເທດ ແລະ ຍັງລວມເປັນເຖິງປັດໄຈທີ່ເປັນບໍ່ເກີດ ແລະ ທີ່ເກີດຂອງສິ່ງທີ່ມີຄ່າ ແລະ ຄວາມມັ່ງຄັ່ງທັງມວນດ້ວຍ ບໍ່ວ່າ ຈະມີຮູບຮ່າງເຊັ່ນ: ເງິນຕາ, ຊັບສິນບັດ, ຊັບໃນດິນສິນໃນນ້ຳ ຫຼື ບໍ່ມີຮູບຮ່າງເຊັ່ນ: ປັນຍາ, ຄວາມຮູ້ຄວາມສາມາດ, ຄວາມມີໄຫວພິບ, ຄວາມສະຫຼາດຫຼັກແຫຼມໃນການແກ້ໄຂບັນຫາຕ່າງໆ ເຊິ່ງປະການຫຼັງນີ້ລ້ວນແຕ່ເປັນຄຸນນະພາບ ແລະ ຄຸນສົມບັດທີ່ມີຄ່າໃນຕົວມະນຸດທັງໝົດ. |
| | ດັ່ງນັ້ນ, ມະນຸດທີ່ມີຄຸນນະພາບເປັນປະໂຫຍດ ແລະ ເປັນບໍ່ເກີດແຫ່ງຊັບ ແລະ ຄວາມມັ່ງຄັ່ງຂອງປະເທດຊາດ ເອີ້ນວ່າເປັນ "ຊັບພະຍາກອນມະນຸດ" |

# ເສດຖະສາດຊັບພະຍາກອນມະນຸດ (Economics of Human Resources)

ເສດຖະສາດຊັບພະຍາກອນມະນຸດ ຫຼື ເສດຖະສາດການສຶກສາເປັນການສຶກສາເຖິງເລື່ອງມະນຸດ ແລະ ສັງຄົມທີ່ຈະເລືອກໃຊ້ຊັບພະຍາກອນທີ່ມີຄ່າ ແລະ ຫາມາໄດ້ຍາກໄປໃຊ້ໃນການຜະລິດການຝຶກອົບຮົມຊະນິດຕ່າງໆ ແລະ ພັດທະນາຄວາມຮູ້, ຄວາມຊຳນານ, ຈິດໃຈ, ອຸປະນິໄສ ແລະ ບຸກຄະລິກ ແລະ ອື່ນໆ

## ເສດຖະສາດຊັບພະຍາກອນມະນຸດ (Economics of Human Resources)

ການສຶກສາຢ່າງມີຮູບແບບຕະຫລອດຊ່ວງເວລາ ແລະ ກະຈາຍ ຫຼື ຖ່າຍທອດຄວາມຮູ້, ຄວາມຊຳນານ ແລະ ສິ່ງດີງາມທັງຫຼາຍທີ່ໄດ້ຈາກການຝຶກອົບຮົມ ແລະ ການສຶກສານັ້ນ ໄປຍັງບຸກຄົນ ແລະ ກຸ່ມບຸກຄົນຕ່າງໆ ໃນສັງຄົມໃນປະຈຸບັນ ແລະ  ອານາຄົດ"

## ເສດຖະສາດຊັບພະຍາກອນມະນຸດ (Economics of Human Resources)

ຫາກສັງຄົມໃດໃຊ້ຊັບພະຍາກອນທີ່ມີຄຸນຄ່າໃນການຝຶກອົບຮົມ ແລະ ໃຫ້ການສຶກສາ ເຮັດໃຫ້ຄົນມີຄວາມຮູ້ຄວາມສາມາດ, ຄວາມຊໍານານ ແລະ ຄຸນນະທໍາອື່ນໆ ດັ່ງກ່າວຫຼາຍເທົ່າໃດ ຄວາມເປັນຊັບພະຍາກອນມະນຸດຂອງຄົນໃນສັງຄົມນັ້ນ ຍ່ອມຈະມີຫຼາຍເທົ່ານັ້ນ ແລະ ຄົນທີ່ມີຄຸນສົມບັດດີໆເຊັ່ນນີ້ຈະສາມາດຜະລິດສິນຄ້າ ແລະ ບໍລິການໃຫ້ແກ່ສັງຄົມຢ່າງມີປະສິດທິພາບ ແລະ ຈະເປັນຄົນໃນສັງຄົມທີ່ສ້າງແຕ່ຄວາມສຸກຄວາມຈະເລີນໃຫ້ແກ່ສັງຄົມ.

# ເສດຖະສາດຊັບພະຍາກອນມະນຸດ (Economics of Human Resources)

ແຕ່ຖ້າຫາກຄອບຄົວ ຫຼື ສັງຄົມໃດສ້າງແຕ່ຄົນທີ່ມີຄວາມຮູ້, ຄວາມສາມາດ, ຄວາມຊຳນານ ເຊິ່ງເປັນຄຸນສົມບັດທີ່ນັກເສດຖະສາດຕາເວັນຕົກເນັ້ນຢ່າງຫຼາຍ ຫາກຂາດຄວາມດຸໝັ່ນ, ບໍ່ຊື່ສັດ ບໍ່ມີຄວາມຮັບຜິດຊອບ, ບໍ່ຕົງຕໍ່ເວລາ, ບໍ່ມີລະບຽບວິໄນ ຫຼື ຄຸນນະທຳອື່ນໆ ປະກອບແລ້ວກໍ່ຢ່າຫວັງວ່າສັງຄົມນັ້ນຈະສາມາດຜະລິດສິນຄ້າ ແລະ ບໍລິການໃຫ້ແກ່ສັງຄົມໄດ້ຫຼາຍ ແລະ ມີປະສິດທິພາບຍັງຈະສ້າງບັນຫາໃຫ້ແກ່ສັງຄົມ ແລະ ປະເທດຊາດໄດ້ອີກດ້ວຍ ໃນກໍລະນີແບບນີ້ຄວາມເປັນຊັບພະຍາກອນມະນຸດມີໜ້ອຍ ອາດຈະເອີ້ນວ່າ **ອະຊັບພະຍາກອນມະນຸດ**ດ້ວຍຊ້ຳ ສະນັ້ນ ມະນຸດຈະເປັນຊັບນັ້ນ ຈະຕ້ອງມີຄຸນນະທຳອື່ນໆ

# ການພັດທະນາຊັບພະຍາກອນມະນຸດ Human Resources Development

- **ການພັດທະນາຊັບພະຍາກອນມະນຸດ:** ແມ່ນຂະບວນການທີ່ມີຈຸດປະສົງເພື່ອປັບປຸງ ຄວາມຮູ້, ທັກສະ, ຄວາມສາມາດ ແລະ ປະສິດທິພາບຂອງບຸກຄະລາກອນໃນອົງກອນຫຼື ສັງຄົມ.
- ການພັດທະນາຊັບພະຍາກອນມະນຸດແມ່ນສຳຄັນທັງໃນລະດັບບຸກຄົນ, ອົງກອນ ແລະ ປະເທດ ຊາດ ເພື່ອໃຫ້ສາມາດຮັບມືກັບການປ່ຽນແປງ ແລະ ສ້າງການພັດທະນາແບບຍືນຍົງ.

# ການພັດທະນາຊັບພະຍາກອນມະນຸດ Human Resources Development

*ອົງປະກອບສຳຄັນຂອງການພັດທະນາຊັບພະຍາກອນມະນຸດ ປະກອບມີ:*

01 → 02 → 03 → **ການພັດທະນາ ຊັບພະຍາກອນມະນຸດ**

01. **ດ້ານການສຶກສາ ແລະ ການຝຶກອົບຮົມ**

02. **ດ້ານການພັດທະນາ ຄວາມສາມາດ**

03. **ດ້ານສຸຂະພາບ ແລະ ສະຫວັດດີການ**

## ຄວາມສຳຄັນຂອງການພັດທະນາຊັບພະຍາກອນມະນຸດ ແລະ ການລົງທຶນດ້ານການສຶກສາ ມຸມມອງໃນປະຫວັດສາດ.

ຖ້າຈະເບິ່ງໃນທາງປະຫວັດສາດແລ້ວ ບຸກຄົນທີ່ໃຫ້ຄວາມສຳຄັນແກ່ຊັບພະຍາກອນມະນຸດຫຼາຍກໍ່ຄື ອາດາມ ສະມິດ (Adam Smith) ໃນຫນັງສື ຄວາມມັ່ງຄັ່ງຂອງຊາດ (The wealth of Nations) ເຊິ່ງໃນສາມບົດທຳອິດໜັງສືເຫຼັ້ມນີ້ໄດ້ຊີ້ໃຫ້ເຫັນຊັດເຈນວ່າ ແຫຼ່ງທີ່ມາຂອງຄວາມມັ່ງຄັ່ງຂອງຊາດນັ້ນຄື ''**ແຮງງານ**'' ແລະ "**ການແບ່ງງານກັນເຮັດຂອງແຮງງານ**" ຄວາມຄິດຂອງອາດາມ ສະມິດຂັດແຍ້ງກັບພວກຟີໂຊແຄດ ເຊິ່ງເນັ້ນເລື່ອງທີ່ດິນວ່າເປັນທີ່ມາຂອງຄວາມລ່ຳລວຍ, ສະມິດນັ້ນວ່າຄວາມມັ່ງຄັ່ງຂອງຊາດຂຶ້ນຢູ່ກັບ (1) ປະສິດທິພາບການຜະລິດຂອງແຮງງານ ແລະ (2) ສັດສ່ວນຂອງແຮງງານໃນປະເທດທີ່ມີວຽກເຮັດ ແລະ ໄດ້ເຮັດວຽກຢ່າງມີປະສິດທິພາບ.

# ດ້ານເປົ້າໝາຍຫລັກຂອງວິຊາເສດຖະສາດຊັບພະຍາກອນມະນຸດ

**ເປົ້າໝາຍຫລັກ**: ໃຊ້ຊັບພະຍາກອນທີ່ສັງຄົມມີຢູ່ຢ່າງຈໍາກັດໃຫ້ມີປະສິດທິພາບ ແລະ ໃຫ້ເກີດປະໂຫຍດສູງສຸດ.

ຊັບພະຍາກອນ: ໄດ້ແກ່

(1) ຊັບພະຍາກອນມະນຸດ ຄືຄວາມຮູ້, ຄວາມສາມາດ, ຄຸນນະທໍາ ເຊິ່ງຢູ່ໃນຜູ້ປະກອບການ, ກໍາລັງຄົນ ແລະ ແຮງງານ

(2) ຊັບພະຍາກອນທີ່ບໍ່ແມ່ນມະນຸດ ທີ່ດິນ ແລະ ທຶນ.

# ດ້ານເປົ້າໝາຍຫລັກຂອງວິຊາເສດຖະສາດຊັບພະຍາກອນມະນຸດ

- ປະໂຫຍດສູງສຸດໃຫ້ແກ່ຄົນໃນສັງຄົມ: ສິນຄ້າ ແລະ ບໍລິການທີ່ຜະລິດຈະຕ້ອງກົງກັບລົດສະນິຍົມຂອງຄົນສ່ວນໃຫຍ່ໃນປະເທດ ຫຼື ກົງກັບຄວາມຕ້ອງການຂອງຄົນສ່ວນໃຫຍ່ ແລະ ຄົນສ່ວນໃຫຍ່ມີໂອກາດໄດ້ບໍລິໂພກ ຫຼື ມີກຳລັງຊື້.
- ໃຜເປັນຜູ້ຜະລິດສິນຄ້າ ແລະ ບໍລິການ: ຊັບພະຍາກອນມະນຸດເປັນຜູ້ຜະລິດສິນຄ້າ ແລະ ບໍລິການ.
- ໃຜເປັນຜູ້ບໍລິໂພກ: ຊັບພະຍາກອນມະນຸດເປັນຜູ້ບໍລິໂພກ ສະນັ້ນ ການໃຊ້ຊັບພະຍາກອນທີ່ສັງຄົມມີຢູ່ຢ່າງຈຳກັດໃຫ້ມີປະສິດທິພາບ ແລະ ເກີດປະໂຫຍດສູງສຸດແກ່ຄົນໃນສັງຄົມ ຊັບພະຍາກອນມະນຸດມີບົດບາດທີ່ສຳຄັນທີ່ສຸດ ເພາະທັງເປັນຜູ້ຜະລິດ ແລະ ຜູ້ບໍລິໂພກ.

# ແນວຄວາມຄິດຂອງການພັດທະນາຊັບພະຍາກອນມະນຸດ.

- **ນິຍາມຂອງການພັດທະນາມະນຸດ**

ການພັດທະນາມະນຸດແມ່ນຂະບວນການສ້າງ ແລະ ເພີ່ມກາລະໂອກາດດ້ານການພັດທະນາທີ່ດີຂຶ້ນໃຫ້ແກ່ຄົນ. ເນື້ອໃນຕົ້ນຕໍຂອງການພັດທະນາມະນຸດ ແມ່ນການຖືເອົາຄົນເປັນໃຈກາງຂອງການພັດທະນາ, ເປັນຜູ້ໄດ້ຮັບຜົນປະໂຫຍດສູງສຸດຈາກການພັດທະນາ, ການພັດທະນາເສດຖະກິດ-ສັງຄົມຕ້ອງຊ່ວຍສ້າງ ແລະ ຍົກລະດັບຊີວິດການເປັນຢູ່ ທີ່ມີຄຸນນະພາບ ແລະ ຍົກລະດັບຄວາມສາມາດເຂົ້າເຖິງ ແລະ ເລືອກຢ່າງອິດສະຫລະດ້ານການປະກອບອາຊີບ ແລະ ການດຳລົງຊີວິດທີ່ດີ, ສະນັ້ນ, ການພັດທະນາມະນຸດບໍ່ພຽງແຕ່ເອົາໃຈໃສ່ການຍົກລະດັບດ້ານເສດຖະກິດ ແຕ່ຍັງຕ້ອງ ຮັບປະກັນຄວາມດຸນດ່ຽງຂອງສັງຄົມ ແລະ ສິ່ງແວດລ້ອມ ເຊິ່ງແມ່ນພື້ນຖານປັດໄຈການດຳລົງຊີວິດທີ່ຮອບດ້ານຂອງ ຄົນ.




Resource of image:
https://www.bigtimedaily.com/creating-better-hiring-practices-how-kentech-can-improve-new-employees/

## ແນວຄວາມຄິດຂອງການພັດທະນາຊັບພະຍາກອນມະນຸດ.

- **ນິຍາມຂອງການພັດທະນາມະນຸດ**

ເວົ້າລວມແລ້ວ ນິຍາມແບບງ່າຍດາຍຂອງການພັດທະນາມະນຸດ ແມ່ນຫມາຍເຖິງວິທີການຂະຫຍາຍທາງ ເລືອກ, ເນື່ອງຈາກວ່າໃນແຕ່ລະວັນທຸກຄົນຕ້ອງໄດ້ຕັດສິນໃຈເລືອກຫລາຍໆທາງເລືອກ ແລະ ທາງເລືອກແຕ່ລະຄັ້ງອາດ ຈະກ່ຽວກັບເສດຖະກິດ, ບາງຄັ້ງກ່ຽວກັບສັງຄົມ ຫລື ວັດທະນະທຳ ເຊິ່ງເປົ້າຫມາຍສູງສຸດຂອງການພັດນາດັ່ງກ່າວ ບໍ່ແມ່ນ ພຽງແຕ່ການສ້າງຄວາມຮັ່ງມີ ຫລື ບັນລຸການຂະຫຍາຍໂຕທາງເສດຖະກິດທີ່ສູງຂຶ້ນແຕ່ຢ່າງດຽວ.




Resource of image:
https://www.bigtimedaily.com/creating-better-hiring-practices-how-kentech-can-improve-new-employees/

# ແນວຄວາມຄິດຂອງການພັດທະນາ ຊັບພະຍາກອນມະນຸດ.

- **ນິຍາມຂອງການພັດທະນາມະນຸດ**

ການພັດທະນາມະນຸດແມ່ນການປັບປຸງ ແລະ ຂະຫຍາຍທາງເລືອກໃຫ້ຄົນກໍ່ຄືປະຊາຊົນໃຫ ກວ້າງຂຶ້ນ ແລະ ຫລາກຫລາຍຂຶ້ນ. ຖ້າຫາກອີງຕາມນິຍາມການພັດທະນາມະນຸດຂອງສະຫະປະຊາຊາດເພື່ອການພັດທະນານັ້ນ, **"ການພັດທະນາມະນຸດຫມາຍເຖິງຂະບວນການເພື່ອຂະຫຍາຍທາງເລືອກຂອງຄົນ".** ອີງຕາມທິດສະດີແລ້ວ, ທາງ ເລືອກເຫລົ່ານີ້ສາມາດມີໄດ້ຢ່າງບໍ່ຈຳກັດ ແລະ ປ່ຽນແປງຕາມການເວລາ, ເຖິງຢ່າງໃດກໍ່ຕາມ, ທາງເລືອກທີ່ຈຳເປັນພື້ນຖານທີ່ສຸດແມ່ນທາງເລືອກທີ່ເຮັດໃຫ້ສາມາດມີຊີວິດທີ່ຍືນຍາວ ແລະ ແຂງແຮງ, ມີການສຶກສາ ແລະ ສາມາດດຳລົງຊີວິດ ຢູ່ໃນມາດຕະຖານການດຳລົງຊີວິດທີ່ເຫມາະສົມ. ນອກຈາກນີ້, ການພັດທະນາມະນຸດຍັງໄດ້ລວມເອົາທາງເລືອກອື່ນອີກ ເຊັ່ນ: ສິດເສລີພາບທາງດ້ານການເມືອງ, ຮັບປະກັນສິດທິມະນຸດ ແລະ ເສລີພາບທາງດ້ານວັດທະນະທຳ.

Resource of image:
https://cz.linkedin.com/pulse/performance-management-upgroweu-awfge



# ແນວຄວາມຄິດຂອງການພັດທະນາຊັບພະຍາກອນມະນຸດ

- **ນິຍາມຂອງການພັດທະນາມະນຸດ**

ອີງຕາມນິຍາມຂອງການພັດທະນາມະນຸດດັ່ງກ່າວ ການພັດທະນາມະນຸດສາມາດແຍກອອກເປັນສອງດ້ານໃຫຍ ຄື:

1. ການພັດທະນາຄວາມອາດສາມາດ ແລະ ປະສິດທິພາບຂອງມະນຸດ ເຊັ່ນ: ການເຮັດໃຫ້ມີສຸຂະພາບ ແລະ ຄວາມ ຮູ້ ຄວາມສາມາດທີ່ດີຂຶ້ນ;
2. ການໃຊ້ຄວາມອາດສາມາດ ແລະ ປະສິດທິພາບຂອງມະນຸດທີ່ໄດ້ຮັບການມີເວລາຫວ່າງ, ເພື່ອເປົ້າຫມາຍຂອງປະ ສິດທິຜົນຂອງການຜະລິດ ຫລື ຄວາມຫມັ້ນຄົງທາງວັດທະນະທຳ, ສັງຄົມ ແລະ ວຽກງານດ້ານການ ເມືອງ.

## ແນວຄວາມຄິດຂອງການພັດທະນາຊັບພະຍາກອນມະນຸດ.

- **ນິຍາມຂອງການພັດທະນາມະນຸດ**

ເຖິງແມ່ນວ່ານິຍາມຂອງການພັດທະນາມະນຸດຈະມີລັກສະນະງ່າຍດາຍ, ແຕ່ການບັນລຸໃຫ້ໄດ້ຕາມນິຍາມດັ່ງກ່າວແມ່ນຍັງຕ້ອງໃຊ້ເວລາ ແລະ ໃຊ້ຄວາມພະຍາຍາມ. ຖ້າອີງຕາມແນວຄວາມຄິດຂອງການພັດທະນາມະນຸດແລ້ວເຫັນໄດ້ຈະແຈ້ງວ່າ ການມີລາຍໄດ້ເພີ່ມສູງຂຶ້ນກໍ່ເປັນສິ່ງຫນຶ່ງທີ່ຈະສາມາດຂະຫຍາຍທາງເລືອກ ແລະ ກໍ່ແມ່ນສິ່ງໜຶ່ງທີ່ທຸກຄົນປາຖະຫນາ ແຕ່ມັນກໍ່ບໍ່ສາມາດຮັບປະກັນໃຫ້ມີການພັດທະນາຕາມເປົ້າຫມາຍຂອງການພັດທະນາມະນຸດ ແລະ ຄວາມຕ້ອງການຂອງມະນຸດກໍ່ບໍ່ແມ່ນການມີລາຍໄດ້ທີ່ເພີ່ມສູງຂຶ້ນເທົ່ານັ້ນ, ມະນຸດຍັງຕ້ອງການເພື່ອການດໍາລົງຊີວິດທີ່ມີຄຸນນະພາບ ເນື່ອງຈາກວ່າມັນຍັງມີປັດໃຈອື່ນໆທີ່ມາກ່ຽວຂ້ອງກັບຄວາມຕ້ອງການຂັ້ນພື້ນຖານຂອງມະນຸດນໍາ.



Resource of image:
https://dorsetwealth.au/human-capital/

## ຄວາມເປັນມາ ແລະ ການພັດທະນາແນວຄວາມຄິດຂອງການພັດທະນາມະນຸດ

ການພັດທະນາທາງດ້ານເສດຖະກິດນັ້ນ ຫາກມີການສົມຄູ່ກັບການພັດທະນາດ້ານອື່ນໆໄປນໍາຢ່າງເຫມາະສົມ ກໍ່ຈະເຮັດໃຫ້ການພັດທະນາດັ່ງກ່າວເກີດປະໂຫຍດຕໍ່ປະຊາຊົນສ່ວນຫຼວງຫຼາຍ ທີ່ສຸດ.



Resource of image: https://youmatter.world/en/category-society/happiness-everyday-happy-4-ways-28181/

## ຄວາມເປັນມາ ແລະ ການພັດທະນາແນວຄວາມຄິດຂອງການພັດທະນາມະນຸດ

ການຂະຫຍາຍໂຕທາງດ້ານເສດຖະກິດ ແລະ ລະດັບຂອງລາຍໄດ້ປະຊາຊາດຫລາຍກວ່າການໃຫ້ຄວາມສໍາຄັນຂອງການພັດທະນາດ້ານອື່ນໆ ເຊັ່ນ: ດ້ານການສຶກສາ, ດ້ານສາທາລະນະສຸກ, ດ້ານຄວາມສະເຫມີພາບໃນການເຂົ້າເຖິງປັດໄຈພື້ນຖານໃນການດໍາລົງຊີວິດຕ່າງໆ ຈຶ່ງເປັນສາເຫດໃຫ້ການພັດທະນາໃນຫລາຍປະເທດບໍ່ປະສົບຜົນສໍາເລັດ, ດັ່ງນັ້ນ, ແນວຄວາມຄິດຂອງການພັດທະນາມະນຸດ ຈຶ່ງແມ່ນແນວຄວາມຄິດກ່ຽວກັບການພັດທະນາຫລາຍມິຕິ, ຫລາຍແງ່ມູມນອກເຫນືອຈາກການພັດທະນາທາງດ້ານເສດຖະກິດພຽງດ້ານດຽວ ເຊິ່ງແມ່ນແນວຄວາມຄິດທີ່ຜັນຂະຫຍາຍຕໍ່ຍອດມາຈາກແນວຄວາມຄິດການພັດທະນາດ້ານວັດຖຸກໍ່ຄືການໃຫ້ຄວາມສໍາຄັນຕໍ່ການພັດທະນາດ້ານເສດຖະກິດຢ່າງດຽວ. ການພັດທະນາຮູບແບບນີ້ເຄີຍຖືກນໍາໃຊ້ຢ່າງກວ້າງຂວາງໃນໄລຍະທ້າຍທົດສະວັດທີ 70.

# ຄວາມເປັນມາ ແລະ ການພັດທະນາແນວຄວາມຄິດຂອງການພັດທະນາມະນຸດ

ການພັດທະນາມະນຸດຈຶ່ງແມ່ນການພັດທະນາທີ່ດຸນດ່ຽງກັນລະຫວ່າງການພັດທະນາເສດຖະກິດ, ສັງຄົມ ແລະ ການເມືອງ. ການເປີດກວ້າງໂອກາດ ແລະ ທາງເລືອກທີ່ຫລາກຫລາຍເພື່ອເຮັດໃຫ້ມະນຸດໄດ້ຮັບຜົນປະໂຫຍດຕ້ອງຮັບປະກັນໄດ້ 3 ປັດໄຈຫລັກ ຄື:

(1) **ມີສຸຂະພາບທີ່ເຂັ້ມແຂງ ແລະ ອາຍຸທີ່ຍືນຍາວ,**

(2) **ມີຄວາມຮູ້ຄວາມສາມາດ**

(3) **ມີມາດຖານການດໍາລົງຊີວິດທີ່ດີ, ຖ້າຂາດສາມທາງເລືອກນີ້ແລ້ວ ບັນດາໂອກາດອື່ນໆກໍ່ຈະບໍ່ສາມາດເຂົ້າເຖິງໄດ້**



Resource of image: https://youmatter.world/en/category-society/happiness-everyday-happy-4-ways-28181/

# ທິດສະດີ ແລະ ຄຸນລັກສະນະສະເພາະຂອງການພັດທະນາມະນຸດ

ຄຸນລັກສະນະຂອງການພັດທະນາມະນຸດ ປະກອບໄປດ້ວຍບັນດາຄຸນລັກສະນະທີ່ມີການພົວພັນກັບການພັດທະນາຢ່າງຮອບດ້ານ, ການພັດທະນາມະນຸດມີຄວາມໃກ້ສິດ ແລະ ກ່ຽວຂ້ອງກັບສິດທິມະນຸດ, ຄວາມປອດໄພຂອງມະນຸດ, ຄວາມສະເຫມີພາບລະຫວ່າງຍິງ-ຊາຍ, ຄວາມຍືນຍົງຂອງສະພາບແວດລ້ອມ ແລະ ເປົ້າຫມາຍສະຫັດສະວັດດ້ານການພັດທະນາ **"Millennium Development Goals ຫລື MDGs".** ການພັດທະນາມະນຸດມີຄວາມກ່ຽວຂ້ອງ ກັບສິດທິມະນຸດຍ້ອນວ່າມັນມີຄຸນລັກສະນະທີ່ສໍາຄັນແບບດຽວກັນ ເຊັ່ນ: ສິດເສລີພາບຂອງມະນຸດ. ການພັດທະນາມະນຸດພະຍາຍາມສົ່ງເສີມ, ຂະຫຍາຍຄວາມອາດສາມາດ ແລະ ກາລະໂອກາດໃຫ້ແກ່ຄົນ ໂດຍການປັງປຸງສິດເສລີພາບໃນການເລືອກ, ສໍາລັບແນວຄວາມຄິດເລື່ອງສິດທິມະນຸດນັ້ນ, ເປົ້າຫມາຍແມ່ນເພື່ອຈະປົກປ້ອງສິດເສລີພາບໃນການເລືອກດັ່ງກ່າວ.




Resource of image: https://www.mdgmonitor.org/millennium-development-goals/

# ທິດສະດີ ແລະ ຄຸນລັກສະນະສະເພາະຂອງການພັດທະນາມະນຸດ

ສຳລັບຄວາມສະເຫມີພາບລະຫວ່າງຍິງ-ຊາຍນັ້ນ, ມັນໄດ້ຖືກບັນຈຸເຂົ້າໃນເກນຫລັກຂອງການພັດທະນາມະນຸດ ຍ້ອນວ່າ ຖ້າຫາກບັນດາຍຸດທະສາດການພັດທະນານັ້ນ ຫາກເນັ້ນຫນັກໃສ່ພຽງແຕ່ຝ່າຍໃດຝ່າຍຫນຶ່ງຈະເປັນສິ່ງທີ່ອັນຕະລາຍ ແລະ ບໍ່ມີຄວາມຍືນຍົງ, ການເສີມຂະຫຍາຍຄວາມອາດສາມາດໃຫ້ແກ່ແມ່ຍິງ ຈະເຮັດໃຫ້ຄວາມແຕກໂຕນລະຫວ່າງຍິງຊາຍຫລຸດລົງ , ພ້ອມທັງຍັງສ້າງຄວາມສະເຫມີພາບໃນການເຂົ້າເຖິງກາລະໂອກາດຕ່າງໆໃນຊີວິດ, ເສດຖະກິດ, ສັງຄົມ, ວັດທະນະທຳ ແລະ ການເມືອງໄດ້ດີຂຶ້ນ. ການພັດທະນາມະນຸດຍັງໄດ້ຕໍ່ຕ້ານການເລືອກປະຕິບັດ ການລະເມີດສິດທິເສລີພາບຂອງຜູ້ຍິງອີກດ້ວຍ.

ສຳລັບເປົ້າຫມາຍສະຫັດສະວັດນັ້ນ, ການພັດທະນາມະນຸດໄດ້ປະກອບສ່ວນໃນການສະຫນອງໂຄງປະກອບການວິເຄາະທີ່ມີຄວາມຊັດເຈນເພື່ອເຮັດໃຫ້ສາມາດບັນລຸເປົ້າຫມາຍສະຫັດສະວັດທີ່ໄດ້ຕັ້ງໄວ້ເພື່ອແກ້ໄຂຄວາມທຸກຍາກຂອງມະນຸດ.



Resource of image: https://www.differenttruths.com/focus-why-adivasi-diversity-challenges-the-core-states-vision/

# ການພັດທະນາມະນຸດ ແລະ ການພັດທະນາຮູບແບບອື່ນທີ່ກ່ຽວຂ້ອງກັນ

**ແນວຄວາມຄິດຂອງການພັດທະນາຊັບພະຍາກອນມະນຸດ**

ແນວຄວາມຄິດຂອງການພັດທະນາຊັບພະຍາກອນມະນຸດ ແມ່ນແນວຄວາມຄິດທີ່ຢູ່ລະຫວ່າງກາງ ລະຫວ່າງການພັດທະນາທາງເສດຖະກິດ ແລະ ການພັດທະນາມະນຸດ ເຊິ່ງໄດ້ຖືກພັດທະນາຂຶ້ນໃນໄລຍະທົດສະວັດທີ 80. ແນວຄວາມຄິດພື້ນຖານຂອງທິດສະດີນີ້ແມ່ນຖືເອົາການພັດທະນາທຶນມະນຸດເຊິ່ງເປັນປັດໄຈຫນຶ່ງທີ່ສໍາຄັນໃນການພັດທະນາ ທີ່ມີປະສິດທິພາບ. ການພັດທະນາມະນຸດແມ່ນມຸມມອງຫນຶ່ງຂອງການ ພັດທະນາມະນຸດ, ການພັດທະນາຊັບພະຍາກອນມະນຸດເອົາໃຈໃສ່ການສ້າງຄວາມອາດສາມາດຂອງຄົນ ເພື່ອສາມາດ ປະກອບອາຊີບທີ່ດີ, ມີຄໍາຕອບແທນທີ່ສູງ ໂດຍສະເພາະແມ່ນການເພີ່ມທັກສະສີມືສະເພາະຂອງແຮງງານ ຕະຫລອດ ເຖິງຄວາມຮູ້ ແລະ ຄວາມສາມາດຂອງເຂົາເຈົ້າ, ການພັດທະນາຊັບພະຍາກອນມະນຸດແມ່ນປັດໄຈຫນຶ່ງທີ່ສໍາຄັນເພື່ອຍົກ ລະດັບການພັດທະນາມະນຸດ.




Resource of image:
https://www.exportersindia.com/product-detail/hr-consultant-5170273.htm

# ການພັດທະນາມະນຸດ ແລະ ການພັດທະນາຮູບແບບອື່ນທີ່ກ່ຽວຂ້ອງກັນ

### *ຄວາມຕ້ອງການຂັ້ນພື້ນຖານຂອງມະນຸດ*

ແນວຄວາມຄິດຂອງຄວາມຕ້ອງການຂັ້ນພື້ນຖານ ແມ່ນໄດ້ຖືກຕີພິມໃນບົດລາຍງານຂອງອົງການແຮງງານສາກົນ (International Labor Organization ຫລື ILO) ໃນປີ 1976. ແນວຄວາມຄິດພື້ນຖານຂອງທິດສະດີນີ້ປະ ກອບດ້ວຍ: ການເພີ່ມລາຍຮັບອີງຕາມຜະລິດຕະພາບຂອງແຮງງານທີ່ມີປະສິດທິພາບ ລວມເຂົ້າກັບຜະລິດຕະພາບຂອງແຮງງານສ່ວນເກີນເພື່ອທີ່ຈະເຮັດໃຫ້ເກີດມີການຈ້າງງານໃຫມ່: ການຈັດຕັ້ງນະໂຍບາຍຂອງລັດຕ້ອງຮັບປະກັນການເຂົ້າ ເຖິງສິນຄ້າ ແລະ ບໍລິການທາງສັງຄົມສອງທາງ ຄື: ຈະຕ້ອງໄດ້ຮັບອາຫານ, ເຄື່ອງນຸ່ງຫົ່ມ ແລະ ທີ່ຢູ່ອາໄສຂັ້ນຕໍ່າ,ຈະຕ້ອງປັບປຸງການບໍລິການສາທາລະນະຕ່າງໆເຊັ່ນ ການສະຫນອງນໍ້າສະອາດ, ສາທາລະນະສຸກ, ການສຶກສາ ແລະ ການຂົນສົ່ງ ເປັນຕົ້ນ: ການພັດທະນາຈະຕ້ອງເປັນການພັດທະນາແບບມີສ່ວນຮ່ວມຂອງປະຊາຊົນ.

# Reference

Human Development Economics. XIONGTOUA,T. SEANGDALA,CH. BOUNTHUNSSENGNGAM,S. KEODOUANGKHAM,P. (2018). Souphanouvong University.

Email Phavone@su.edu.la

Phone +856 20 28 616 221